

ຄວາມເຊື່ອ: ແມ່ຍິງທີ່ເປັນປະຈຳເດືອນຄັ້ງທຳອິດ ຖ້າລາວເອົາເລືອດປະຈຳເດືອນ
ລາວມາທາ ໜ້າຈະເຮັດ ໃຫ້ໜ້າໃສ ແລະ ບໍ່ມີສິວ

ອະທິບາຍ: ນີ້ແມ່ນຄວາມເຊື່ອທີ່ບໍ່ຖືກຕາມຫຼັກການວິທະຍາສາດຍ້ອນວ່າເລືອດປະຈຳເດືອນບໍ່ສາມາດເຮັດໃຫ້ໜ້າໃສຂຶ້ນແຕ່ຢ່າງໃດ ເພາະວ່າໃນເລືອດປະຈຳເດືອນບໍ່ມີສານຂ້າເຊື້ອແບັກທີເລີຍທີ່ເຮັດໃຫ້ສິວເຮົາອັກເສບນອກຈາກນີ້ຜິວໜັງຢູ່ໜ້າເຮົາບໍ່ສາມາດຊຶມຊັບເອົາເລືອດມາເປັນສິ່ງບຳລຸງຜິວໜ້າ.

ເລືອດປະຈຳເດືອນຂອງແມ່ຍິງມາຈາກການບີບຕົວພາຍໃນມົດລູກແລ້ວອອກມາເປັນເລືອດເຊິ່ງພວກເຮົາຄວນເຂົ້າໃຈວ່າມັນກໍເປັນເລືອດປົກກະຕິໃນຮ່າງກາຍເຮົາທີ່ບໍ່ມີຫຍັງວິເສດກວ່ານີ້.